ຫ້ອງວ່າການລັດຖະບານ

ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ (ຄພທສ)

ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ)

-------------------------------------------

# ບົດສະຫຼຸບປະຈຳເດືອນ

# ກ່ຽວກັບການຈັດຕັ້ງປະຕິບັດໂຄງການຍ່ອຍ ທລຍ

# ທັນວາ 2015

**ຄະນະ-ຮັບຜິດຊອບ ທລຍ ສູນກາງ**

*__ກະກຽມໂດຍ:__* ພະແນກຕິດຕາມ-ປະເມີນຜົນ

8 ມັງກອນ 2016

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການລັດຖະບານ
ຄະນະພັດທະນາຊົນນະບົດ ແລະ
ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ (ຄພທສ)
**ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ)**

ເລກທີ 0027/ທລຍ

## ບົດສະຫຼຸບປະຈຳເດືອນ ທັນວາ 2015
## ແລະ ແຜນວຽກເດືອນ ມັງກອນ 2016

ສິ່ງທີ່ພົ້ນເດັ່ນໃນເດືອນທັນວາ 205 ທີ່ຜ່ານມາ ໄດ້ມີການປະເມີນຂອງບັນດາຜູ້ໃຫ້ທຶນໃນລະຫວ່າງວັນທີ 31 ພະຈິກ - 11 ທັນວາ 2015 ໂດຍລວມແລ້ວຜູ້ໃຫ້ທຶນແມ່ນມີຄວາມເພິ່ງພໍໃຈກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງ ທລຍ ເປັນຕົ້ນແມ່ນການປະຕິບັດຕາມລະບຽບຫລັກການ ແລະ ບັນລຸຈຸດປະສົງຂອງໂຄງການ ແນວໃດກໍ່ຕາມເພື່ອໃຫ້ບັນລຸຄາດໝາຍຂອງໂຄງການ ຜູ້ໃຫ້ທຶນແມ່ນໃຫ້ເອົາໃຈໃສ່ການຈັດຕັ້ງປະຕິບັດຮອບວຽນ 13 ສົກປີ 2015-2016 ໃຫ້ປະກົດຜົນເປັນຈິງເພາະເປັນຮອບວຽນສຸດທ້າຍຂອງ ທລຍ 2 ໄປຄຽງຄູ່ກັບການກະກຽມ ແລະ ອອກແບບ ທລຍ 3 ໃຫ້ມີປະສິດຕິພາບກ່າວເກົ່າ.

ທລຍ ໄດ້ເອົາໃຈໃສ່ຕິດຕາມບັນດາໂຄງການທີ່ໄດ້ຮັບການຊ່ວຍເຫລືອໄລຍະທີ່ຜ່ານມາເພື່ອຮັບປະກັນວ່າໂຄງການເຫລົ່ານັ້ນຍັງສາມາດອຳນວຍຄວາມສະດວກໃຫ້ແກ່ຊີວິດການເປັນຢູ່ຂອງພໍ່ແມ່ປະຊາຊົນ ແລະ ໃນກໍລະນີໂຄງການຫາກເປ່ເພກໍຊອກຫາວິທີທາງອອກເພື່ອໃຫ້ມີການສ້ອມແປງຄືນໃຫມ່. ແຕ່ປີ 2012-2015 ທລຍ ໄດ້ໃຫ້ການຊ່ວຍເຫລືອ ທັງໝົດ 1,426 ໂຄງການ ຢູ່ 42 ເມືອງໃນ 10 ແຂວງ ແລະ ມີຜູ້ໄດ້ຮັບຜົນປະໂຫຍດໂດຍກົງ 684,559 ຄົນເປັນຍິງ 339,387 ຄົນ ແລະ ມາຮອດທ້າຍທ້າຍເດືອນທັນວາ 2015 ມີຈຳນວນ 1,364 ໂຄງການຖືກຈັດຕັ້ງປະຕິບັດສຳເລັດ ແລະ ນຳໃຊ້ງົບປະມານທັງໝົດ 266,904,464,258 ຕື້ກີບ.

ສຳລັບການຈັດຕັ້ງປະຕິບັດຮອບວຽນທີ 13 (ສົກປີ 2015-2016) ຕາມຕົວເລກຂອງການສະຫລຸບໃນການວາງແຜນຂັ້ນເມືອງທັງໝົດ 42 ເມືອງໃນ 278 ກຸ່ມບ້ານແມ່ນມີຈຳນວນ 495 ໂຄງການທີ່ໄດ້ຖືກຄັດເລືອກ ແຕ່ຈຳນວນດັ່ງກ່າວອາດມີການປ່ຽນແປງ ຫລັງຈາກການລົງສຳຫລວດອອກແບບຕົວຈິງ ແລະ ການອານຸມັດຈາກຜູ້ໃຫ້ທຶນ ສຳຫລັບຮອບວຽນດັ່ງກ່າວເປັນຮອບວຽນສຸດທ້າຍຂອງ ທລຍ 2 ຄາດວ່າຈະໄຊ້ງົບປະມານເປັນຢ່າງໜ້ອຍ 13 ລ້ານໂດລາສະຫະລັດ ເຂົ້າໃນການກໍ່ສ້າງໂຄງການຍ່ອຍ ສຳລັບລາຍລະອຽດຕົວຈິງ ຄາດວ່າຈະໄດ້ລາຍງານໃນເດືອນ ມີນາ 2016 ສຳລັບໂຄງການທີ່ເປັນທຶນສົມທົບລັດຖະບານໃນງວດທີ່ 1 ຈຳນວນ 52 ໂຄງການ ນຳໃຊ້ງົບປະມານ 16 ຕື້ກີບ ປະຈຸບັນມີ 39 ໂຄງການສຳເລັດການປະມູນແລ້ວ ແລະ ອີກ 13 ໂຄງການກຳລັງຢູ່ໃນຂັ້ນຕອນການປະມູນ.

## 1. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ

### 1.1 *ຮອບວຽນ 12 (ສົກປີ 2014-2015)*

ສຳລັບຮອບວຽນ 12 (ສົກປີ 2014-2015) ມີຈຳນວນທັງໝົດ 438 ໂຄງການຍ່ອຍ ໃນນັ້ນຈຳນວນໂຄງການຍ່ອຍພາຍໃຕ້ທຶນພາຍໃນ ມີ 74 ໂຄງການ ເປັນມູນຄ່າປະມານ 16 ຕື້ກີບ ທີ່ໄດ້ຜ່ານການປະມູນແລ້ວ. ໃນນັ້ນຈັດຕັ້ງປະຕິບັດສຳເລັດແລ້ວ 100% ມີ 382 ໂຄງການເທົ່າກັບ 87.2 %, ຄວາມຄືບໜ້າຫລາຍກວ່າ 50% ມີ 39 ໂຄງການ ໜ້ອຍກວ່າ 50% ມີ 10 ໂຄງການ ສ່ວນທີ່ເຫລືອ 13 ໂຄງການແມ່ນກຳລັງກະກຽມເພື່ອຈັດຕັ້ງປະຕິບັດ ດັ່ງລາຍລະອຽດຕາມຕາຕະລາງລຸ່ມນີ້:

ຕາຕະລາງ 1. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 12

| ແຂວງ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ສະຫວັນນະເຂດ | 59 | 54 | 2 | 0 | 3 |
| ສາລະວັນ | 31 | 19 | 12 | 0 | 0 |
| ຊຽງຂວາງ | 42 | 42 | 0 | 0 | 0 |
| ຜົ້ງສາລີ | 25 | 13 | 6 | 4 | 2 |
| ຫລວງນ້ຳທາ | 21 | 18 | 2 | 1 | 0 |
| ຫົວພັນ | 124 | 124 | 0 | 0 | 0 |
| ຫຼວງພະບາງ | 48 | 38 | 7 | 3 | 0 |
| ອຸດົມໄຊ | 50 | 45 | 3 | 0 | 2 |
| ອັດຕະປື | 18 | 15 | 2 | 1 | 0 |
| ເຊກອງ | 20 | 14 | 5 | 1 | 0 |
| ລວມ | **438** | **382** | **39** | **10** | **7** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ຫລຍ, 31 ທັນວາ 2015*

ຕາຕະລາງ 2. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 12 (ແຍກຕາມຂະແໜງການ)

| ຂະແໜງການ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ກະສິກຳ ແລະ ປ່າໄມ້ | 41 | 39 | 1 | 0 | 1 |
| ຄົມມະນາຄົມ | 75 | 63 | 7 | 4 | 1 |
| ສາທາລະນະສຸກ | 23 | 20 | 3 | 0 | 0 |
| ສຶກສາ | 165 | 141 | 16 | 5 | 3 |
| ນ້ຳສະອາດ ແລະ ສຸຂະອະນາໄມ | 132 | 118 | 12 | 1 | 1 |
| ພະລັງງານ ແລະ ບໍ່ແຮ່ | 2 | 1 | 0 | 0 | 1 |
| ລວມ | **438** | **382** | **39** | **10** | **7** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ຫລຍ, 31 ທັນວາ 2015*

ຕາງຕະລາງ 3. ທຶນສົມທົບລັດຖະບານຮອບວຽນ 12

| ແຂວງ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ສະຫວັນນະເຂດ | 15 | 15 | 0 | 0 | 0 |
| ສາລະວັນ | 12 | 7 | 5 | 0 | 0 |
| ຊຽງຂວາງ | 13 | 13 | 0 | 0 | 0 |
| ຫົວພັນ | 21 | 21 | 0 | 0 | 0 |
| ອັດຕະປື | 10 | 7 | 2 | 1 | 0 |
| ເຊກອງ | 3 | 3 | 0 | 0 | 0 |
| **ລວມ** | **74** | **66** | **7** | **1** | **0** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ທັນວາ 2015*

ຕາງຕະລາງ4. ທຶນສົມທົບລັດຖະບານຮອບວຽນ 12 (ແຍກຕາມຂະແໜງການ)

| ຂະແໜງການ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ກະສິກຳ ແລະ ປ່າໄມ້ | 9 | 9 | 0 | 0 | 0 |
| ຄົມມະນາຄົມ | 6 | 4 | 2 | 0 | 0 |
| ສາທາລະນະສຸກ | 8 | 8 | 0 | 0 | 0 |
| ສຶກສາ | 26 | 22 | 3 | 1 | 0 |
| ນ້ຳສະອາດແລະສຸຂະອະນາໄມ | 24 | 22 | 2 | 0 | 0 |
| ພະລັງງານ ແລະ ບໍ່ແຮ່ | 1 | 1 | 0 | 0 | 0 |
| **ລວມ** | **74** | **66** | **7** | **1** | **0** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ທັນວາ 2015*

### 1.2. ຮອບວຽນ 11 (ສົກປີ 2013-2014)

ການຈັດຕັ້ງປະຕິບັດມາຮອດທ້າຍເດືອນທ້າຍເດືອນ ທັນວາ 2015 ມີຄວາມຄືບໜ້າດັ່ງນີ້: ຈາກທັງໝົດ 333 ໂຄງການ, 328 ໂຄງການ (98.4%) ແມ່ນໄດ້ຈັດຕັ້ງປະຕິບັດສຳເລັດ 100%, ສຳລັບໂຄງການທີ່ມີຄວາມຄືບໜ້າຫລາຍກວ່າ 50% ແມ່ນມີຈຳນວນ 5 ໂຄງການ ແລະ ຄາດວ່າຈະສຳເລັດໃນມໍ່ໆ ນີ້. ທຸກໆ ໂຄງການໃນຮອບວຽນດັ່ງກ່າວແມ່ນໄດ້ເລີ່ມຈັດຕັ້ງປະຕິບັດທັງໝົດ. ແລະ ຍັງເຫລືອພຽງ 5 ໂຄງການທີ່ບໍ່ທັນສຳເລັດ ແລະ ກຳລັງຈັດຕັ້ງປະຕິບັດຢູ່ ເຊິ່ງມີລາຍລະອຽດ ແລະ ຄວາມຄືບໜ້າດັ່ງຕາຕະລາງລຸ່ມນີ້:

ຕາຕະລາງ 5. ໂຄງການທີ່ຫລ້າຊ້າໃນຮອບວຽນ 11

| ຮອບວຽນ | ຊື່ໂຄງການ | ແຂວງ | ເມືອງ | ກຸ່ມບ້ານ | ບ້ານ | ຄວາມຄືບໜ້າ% |
|---|---|---|---|---|---|---|
| 11 | ກໍ່ສ້າງຕະຫລາດຊຸມຊົນ | ອັດຕະປື | ພູວົງ | ວົງສໍາພັນ | ຄໍາວົງສາ | 80 |
| 11 | ກໍ່ສ້າງສຸກສາລາ | | ພູວົງ | ສົມບຸນ | ພູຍາງ | 90 |
| 11 | ສ້ອມແປງລະບົບນໍ້າລິນ | ຫຼວງພະບາງ | ໂພນໄຊ | ກຸ່ມ ບ້ານນໍ້າບໍ່ | ຫ້ວຍມັນ | 80 |
| 11 | ກໍ່ສ້າງຂົວອູ່ | ຫລວງນໍ້າທາ | ນາແລ | ພູຫຼວງ | ພູຫຼວງມິກຈົງ | 58 |
| 11 | ກໍ່ສ້າງຂົວອູ່ | | ລອງ | ບວກບໍ່ (ຈ່າໃໝ່ ) | ແສນຈູມປູ(ຈ່າປີ) | 65 |

*<u>ແຫຼ່ງຂໍ້ມູນ</u>: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ທັນວາ 2015*

ສາຍເຫດຂອງການລ້າຊ້າສ່ວນໃຫຍ່ເກີດຈາກຂັ້ນຕອນຈັດຕັ້ງປະຕິບັດຂອງຜູ້ຮັບເໝົາ ເນື່ອງຈາກພື້ນທີ່ສ່ວນໃຫຍ່ຢູ່ຫ່າງກຊອກຫລີກ ເຮັດໃຫ້ການຈັດສົ່ງວັດສະດຸຫລ້າຊ້າ ແລະ ບາງໂຄງການແມ່ນມີຄວາມຈໍາເປັນທີ່ຈະຕ້ອງນໍາເຂົ້າວັດສະດຸຈາກຕ່າງປະເທດເຮັດໃຫ້ເກີດຄວາມຊັກຊ້າເນື່ອງຈາກຈະຕ້ອງໄດ້ກວດວັດສະດຸຢ່າງເຂັ້ມງວດກ່ອນນໍາເຂົ້າ.

## 1.3. <u>ງົບປະມານ ແລະ ການເບີກຈ່າຍສໍາລັບການຈັດຕັ້ງປະຕິບັດໂຄງການຍ່ອຍ ທລຍ 2</u>

ສໍາລັບການເບີກຈ່າຍງົບປະມານຮອດທ້າຍເດືອນ ທັນວາ 2015 ໃນແຕ່ລະຮອບວຽນຄື: ຮອບວຽນ 9, ເບີກຈ່າຍສໍາເລັດແລ້ວ 100% ຈໍານວນ 61,114,300,917 ກີບ ແລະສໍາຫລັບຮອບວຽນ 10 ເບີກຈ່າຍໄປແລ້ວ 78,883,029,606 ກີບ ເທົ່າກັບ 99.7% ຂອງງົບປະມານທັງໝົດ ແລະ ຮອບວຽນ 11 ແມ່ນໄດ້ເບີກຈ່າຍແລ້ວຈໍານວນ 76,266,395,400 ກີບ ຫລື ເທົ່າກັບ 98.7% ຂອງງົບປະມານທັງໝົດ ແລະ ສາລັບຮອບວຽນ 12 ງົບປະມານທັງໝົດ 82,818,201,583 ກີບ ເບີກຈ່າຍໄປແລ້ວ 65,823,809,428 ກີບ ຫລື ເທົ່າກັບ 79.26% ລາຍລະອຽດດັ່ງຕາຕະລາງລຸ່ມນີ້:

ຕາຕະລາງ 6. ຄວາມຄືບໜ້າໃນການເບີກຈ່າຍງົບປະມານໂຄງການຍ່ອຍ ແຕ່ລະຮອບວຽນ (2011-2015)

| ຮອບວຽນ (ສົກປີ) | ຈ/ນ ໂຄງການ ທັງໝົດ | ງົບປະມານ (ກີບ) | ຈ/ນ ກໍ່ສ້າງ ສໍາເລັດ 100% | ການເບີກຈ່າຍ ງົບປະມານ (ກີບ) | ຍອດເຫຼືອ |
|---|---|---|---|---|---|
| ຮອບວຽນ 9 (2011-2012) | 262 | 61,114,300,917 | 262 | 61,114,300,917 | ສໍາເລັດ |
| ຮອບວຽນ 10 (2012-2013) | 393 | 79,125,251,302 | 392[1] | 78,883,029,606 | 242,221,696 |
| ຮອບວຽນ 11 (2013-2014) | 333 | 77,447,824,567 | 328 | 76,266,395,400 | 1,181,429,167 |
| ຮອບວຽນ 12 (2014-2015) | 438 | 82,818,201,583 | 382 | 65,823,809,428 | 16,994,392,155 |
| ລວມ | 1,426 | 300,505,578,369 | 1,364 | 282,087,535,351 | 18,418,043,018 |
| ແຜນການເບີກຈ່າຍງົບປະມານໂຄງການຍ່ອຍ ຮອບວຽນ 13 (2015-2016) | | | | | |
| ຮອບວຽນ (ສົກປີ) | ຈ/ນ ໂຄງການ ທັງໝົດ | ງົບປະມານ (ກີບ) | ຈ/ນ ກໍ່ສ້າງ ສໍາເລັດ 100% | ການເບີກຈ່າຍ ງົບປະມານ | ຮອບວຽນ (ສົກປີ) |

[1] ຂົວອູ່ ບ້ານສະແກນ ກຸ່ມສະແກນ ເມືອງນາແລ ແຂວງ ຫລວງນໍ້າທາ

| | | | | | |
|---|---|---|---|---|---|
| ຮອບວຽນ 13 (ສົກປີ 2015-2016) | 495[2] | 13 ລ້ານໂດລາສະຫາລັດ | - | (ຍັງບໍ່ໄດ້ເບີກຈ່າຍ) ການເບີກຈ່າຍນັ້ນ ຈະໄດ້ແບ່ງເປັນ 2 ງວດຄື: ງວດທີໜຶ່ງ ແມ່ນເບີກຈ່າຍ ໃນລະຫວ່າງເດືອນ ມັງກອນ-ກັນຍາ 2016 ແລະ ງວດທີສອງແມ່ນໃນລະຫວ່າງເດືອນ ພະຈິກ-ທັນວາ ຂອງປີ 2016 ງວດລະ 16 ຕື້ກີບ. | ຮອບວຽນ 13 (ສົກປີ 2015-2016) |

*ແຫຼ່ງຂໍ້ມູນ: ພະແນກບໍລິຫານ - ການເງິນ, ທລຍ, 31 ທັນວາ 2015*

## 2. ວຽກງານວິຊາສະເພາະ ແລະ ຕິດຕາມໂຄງການ

- **ວຽກງານພັດທະນາຊຸມຊົນ**

- ສຳເລັດການວາງແຜນພັດທະນາຂັ້ນບ້ານທີ່ຈັດຕັ້ງປະຕິບັດໂດຍຊຸມຊົນເຕັມຮູບແບບ (CDD )ໄດ້ 100% ຂອງຈຳນວນ 136 ບ້ານ 62 ຄຸ່ມ ຢູ່ 3 ເມືອງ (CDD) ໃຫມ່ ຄືເມືອງ ຊຽງຄໍ້, ເມືອງ ຫົວເມືອງ ແຂວງ ຫົວພັນ ແລະ ເມືອງ ທ່າປາງທອງ ແຂວງ ສະຫວັນນະເຂດ.
- ສຳລັບ 5 ເມືອງທົດລອງ ການກໍ່ສ້າງໂດຍຊຸມຊົນ (CFA) ແມ່ນ 4 ເມືອງໄດ້ສຳເລັດການເຊັນສັນຍາຊຸມຊົນກັບຮ້ານສິ່ງວັດສະດຸກໍ່ສ້າງ ແລະ ໄດ້ສິ່ງວັດສະດຸກໍ່ສ້າງເຂົ້າສະຖານທີ່ກໍ່ສ້າງ, ໄດ້ເຊັນສັນຍາກັບນາຍຊ່າງ ແລະ ວິຊາການປະຈຳພາກສະໜາມ. ສຳລັບ ເມືອງ ນາໝໍ້ ແຂວງ ອຸດົມໄຊ ປັດຈຸບັນຍັງຢູ່ໃນໄລຍະ ຈັດຊື້-ຈັດຈ້າງ.
- ໄດ້ເຂົ້າຮ່ວມກອງປະຊຸມກັບໜ່ວຍງານ ວິສະວະກຳ ແລະ ຕິດຕາມ-ປະເມີນຜົນ ໃນການປັບປຸງແບບຟອມເກັບກຳຂໍ້ມູນຂອງໂຄງການຍ່ອຍພາຍຫລັງສຳເລັດໂຄງການ 6-12 ເດືອນ 2015 ແລະ ຈະລົງເກັບກຳຂໍ້ມູນໂຄງການຍ່ອຍຂອງຮອບວຽນ 11 ໃນເດືອນ ມັງກອນ ປີ 2016.
- ສັງລວມຂໍ້ມູນຜູ້ປະສານງານກຸ່ມບ້ານປະຈຳຮອບວຽນ 13, ສັງເກດໄດ້ເປີເຊັນສະມາຊິກຍິງ ແລະ ຊົນເຜົ່າເພີ່ມຂຶ້ນຕາມລຳດັບ ແລະ ວັນທີ 10-11 ທັນວາ ເຂົ້າຮ່ວມຝຶກອົບຮົມ ກ່ຽວກັບ "ການວາງແຜນສົ່ງເສີມສິດສະເໝີພາຍຍິງຊາຍ, ການພັດທະນາແມ່ຍິງ ແລະ ການຕິດຕາມ-ປະເມີນຜົນ ການຈັດຕັ້ງປະຕິບັດ" ກັບໜ່ວຍງານ ຄພທສ ທີ່ໂຮງແຮມ ເກລນໝາກ ຊຶ່ງຈັດຂຶ້ນໂດຍ ກອງສົ່ງເສີມຄວາມກ້າວໜ້າແມ່ຍິງແຫ່ງຊາດ.
- ປັບປຸງແຜນດຳເນີນວຽກງານ ສົ່ງເສີມຊິດສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງກຸ່ມ ສຳລັບການຈັດຕັ້ງປະຕິບັດໃນຮອບວຽນ 13 ແລະ ໃນວັນທີ 21-24 ທັນວາ 2015 ລົງຕິດຕາມການນຳເນີນວຽກງານຂອງຄະກວດສອບຂັ້ນບ້ານ, ຜົນກະທົບທາງສັງຄົມ ແລະ ການຈັດກອງປະຊຸມສະຫລຸບລາຍງານການຈັດຕັ້ງປະຕິບັດໂຄງການຍ່ອຍຂັ້ນບ້ານ.

---

[2] ແມ່ນຕົວເລກວາງແຜນຂັ້ນເມືອງ ອາດມີການປ່ຽນແປງຫລັງຈາກສຳຫລວດອອກແບບ ແລະ ອະນຸມັດຈາກຜູ້ໃຫ້ທຶນ

- ກວດກາ ແລະ ສັງລວມແຜນງົບປະມານການຈັດທັດສະນະສຶກສາ ສຳລັບຜູ້ປະສານງານກຸ່ມບ້ານແມ່ຍິງຢູ່ເມືອງ CDD ແຂວງ ຫລວງພະບາງ.
- ສຳເລັດການທົບທວນຄືນ ບັນດາ MOU ກ່ຽວກັບວຽກງານກະຈ່າຍຂໍ້ມູນຂ່າວສານຂັ້ນແຂວງ ແລະ ເມືອງ ແລະ ສູນກາງ ເພື່ອກຽມພອ້ມສືບຕໍ່ເຊັນສັນຍາ ເພື່ອກະຈາຍຂໍ້ມູນຂ່າວສານໃນຮອບວຽນທີ່ 13 ຂອງ ທລຍ.
- ກະກຽມຜະລິດຄູ່ມື ນະໂຍບາຍດ້ານຊົນເຜົ່າ ພາລາວ-ອັງກິດ, ນະໂຍບາຍການຍົກຍ້າຍຖິ່ນຖານ ແລະ ທົດແທນຄືນ ພາສາລາວ-ອັງກິດ, ນະໂຍບາຍດ້ານສັງຄົມ ແລະ ສິ່ງແວດລ້ອມ ພາສາລາວ-ອັງກິດ, ປື້ມສະມາຊິກກຸ່ມທ້ອນເງິນ ຂອງກິດຈະກຳປັບປຸງຊີວິດການເປັນຢູ່ ເພື່ອຮັບໃຊ້ໃນການຂະຫຍາຍອີກ 80 ບ້ານ.

- <u>ວຽກງານວິສະວະກຳ ແລະ ວິຊາການ</u>

- ສຳເລັດການປະດັບປະດາລົດຂະບວນແຫ່ສະເຫລີມສະຫລອງວັນຊາດທີ 2 ທັນວາ 2015.
- ກະກຽມແຜນລົງກວດກາໂຄງການຍ່ອຍ ພາຍໃຕ້ທຶນສົມທົບລັດຖະບານ ຮ່ວມກັບສະພາແຫ່ງຊາດ, ກະຊວງການເງິນ, ຄພທສ ແລະ ກະຊວງແຜນການ.
- ລົງຕິດຕາມໂຄງການຍ່ອຍ ຮອບວຽນທີ 11, 12 ແລະ ສືບຕໍ່ເຮັດວຽກຮ່ວມກັບ ອົງການແຮງງານສາກົນ (ILO).
- ກະກຽມສຳຫລວດໂຄງການຍ່ອຍທີ່ນຳໃຊ້ໂດຍສາກົນ (IDA) ຮອບວຽນທີ 13 ທັງໝົດ 10 ແຂວງ ຢູ່ 42 ເມືອງເປົ້າໝາຍຂອງ ທລຍ.
- ຝຶກອົບຮົມຜູ້ອຳນວຍຄວາມສະດວກດ້ານວຽກງານຊຸມຊົນເປັນເຈົ້າໃນດ້ານສຸຂະອານາໄມ (ຊຈສ) ຢູ່ເມືອງນອງ, ແຂວງ ສະຫວັນນະເຂດ; ແຂວງສາລະວັນ, ເຊກອງ ແລະ ແຂວງ ອັດຕະປື.
- ກະກຽມຝຶກອົບຮົມພື້ນຖານການນຳໃຊ້ໂປຣແກຣມແຜນທີ່ ແລະ ສືບຕໍ່ກະກຽມສ້າງຫລັກສູດການນຳໃຊ້ 3D.
- ກະກຽມແຜນລົງຕິດຕາມຄຸນນະພາບໂຄງການຮອບວຽນ 11 ຮ່ວມກັບຊ່ຽວຊານທະນາຄານໂລກ ທ່ານ Garvan.
- ສືບຕໍ່ກະກຽມເອກະສານກວດກາທາງດ້ານສິ່ງແວດລ້ອມ ປະກອບເຂົ້າໃນໂຄງການ ທີ່ຊຸມຊົນເປັນຜູ້ຈັດຕັ້ງປະຕິບັດເອງ ຫລື Community Force Account (CFA).
- ກະກຽມຫລັກສູດການກວດກາຄຸນນະພາບສຳລັບຊຸມຊົນ ເພື່ອໄປຝຶກອົບຮົມໃຫ້ທີມງານຈັດຕັ້ງປະຕິບັດຂັ້ນບ້ານສຳລັບໂຄງການທີ່ຊຸມຊົນເປັນຜູ້ຈັດຕັ້ງປະຕິບັດ.
- ຝຶກອົບຮົມຮູບແບບ ແລະ ວິທີການຈັດຕັ້ງປະຕິບັດໂຄງການທົດລອງ ການຈັດຕັ້ງປະຕິບັດໂດຍຊຸມຊົນເຕັມຮູບແບບ ຢູ່ແຂວງ ຫລວງພະບາງ, ອຸດົມໄຊ ແລະ ແຂວງ ສະຫວັນນະເຂດ.

- <u>ວຽກງານຕິດຕາມ-ປະເມີນຜົນ</u>

- ໄດ້ສຸມໃສ່ຕິດຕາມ ຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການຮອບວຽນ 13 ເພື່ອຮັບປະກັນໃຫ້ການ ຈັດຕັ້ງປະຕິບັດໂຄງການໃຫ້ສຳເລັດຕາມກຳນົດເວລາໃນນັ້ນມີຈຳນວນ 52 ໂຄງການທີ່ເປັນທຶນສົມທົບລັດຖະບານ ແລະ ຍັງຢູ່ພາຍໃຕ້ການສຳຫລວດອອກແບບ ກ່ອນສົ່ງຂໍອະນຸມັດຈາກຜູ້ໃຫ້ທຶນໃນເດືອນກຸມພາ 2016.
- ທາງພະແນກຍັງໄດ້ປະກອບສ່ວນອອກແບບໂຄງການ ທລຍ ໄລຍະທີ 3 ກ່ຽວກັບຮູບແບບການຈັດຕັ້ງປະຕິບັດ, ປະເພດຂອງກິດຈະກຳຕົວຊີ້ວັດ ແລະ ຖານຂໍ້ມູນ.

- ສຳເລັດການຝຶກອົບຮົມກ່ຽວກັບການນຳໃຊ້ລະບົບຖານຂໍ້ມູນໃໝ່ຂອງ ທລຍ ໄລຍະທີ 2 ໃນລະຫວ່າງວັນທີ 15-17 ເດືອນທັນວາ 2015. ຈຸດປະສົງຫຼັກຂອງການຝຶກອົບຮົມ ແມ່ນເພື່ອເປັນການແນະນຳ, ຮຽນຮູ້ບາງຈຸດທີ່ສຳຄັນຂອງຖານຂໍ້ມູນ (MIS) ທີ່ໄດ້ມີການປັບປຸງ ແລະ ນຳໃຊ້ລະບົບຖານຂໍ້ມູນຂອງ ທລຍ ພ້ອມທັງເປັນການນຳສະເໜີຜ່ານບົດລາຍງານການປະເມີນຄວາມຍືນຍົງຂອງໂຄງການຍ່ອຍ ແລະ ບົດລາຍງານການປະເມີນຄວາມເຂົ້າໃຈໃນການນຳໃຊ້ເຄື່ອງມື ກສກ ມີຜູ້ເຂົ້າຮ່ວມທັງໝົດ 29 ທ່ານເປັນຍິງ 10 ທ່ານ ທີ່ມາຈາກພະແນກຕິດຕາມ-ປະເມີນຜົນແຂວງ, ເມືອງ, ສູນກາງ ແລະ ພະແນກອື່ນໆຂອງ.

- <u>ວຽກງານບໍລິຫານ - ການເງິນ</u>

- ສຳເລັດເບີກຖອນເງິນໂຄງການຍ່ອຍບ້ວງທຶນສົມທົບລັດຖະບານຮອບວຽນ 12, ຈຳນວນ 36 ໂຄງການ, ປະມານ 8 ຕື້ກີບ
- ສຳເລັດການປິດສະຫລຸບບັນຊີລາຍງານ ປະຈຳເດືອນ ພະຈິກ 2015, ສຳລັບສົກປີ 2015-2016.
- ກະກຽມເອກະສານຄ່ຽນເງິນໂຄງການຍ່ອຍບ້ວງຜູ້ໃຫ້ທຶນສຳລັບຮອບວຽນ 12 ຂອງແຂວງ ສາລະວັນ ຈຳນວນ 325,796 ໂດລາສະຫະລັດ ຈາກຄັງເງິນແຫ່ງຊາດ

- <u>ວຽກງານຈັດຕັ້ງ</u>

- ກະກຽມການສັງລວມບົດປະເມີນການປະຕິບັດວຽກ ທີ່ຈະຖືກສົ່ງມາຈາກແຕ່ລະແຂວງ ລວມທັງສູນກາງ: ປະຈຸບັນໄດ້ຮັບບົດປະເມີນຜົນການປະຕິບັດວຽກຂອງພະນັກງານຈາກທຸກໆແຂວງເປັນທີ່ຮຽບຮ້ອຍ ແລະ ໄດ້ຈັດສົ່ງໃຫ້ທຸກພະແນກຢູ່ຂັ້ນສູນກາງ ເພື່ອດຳເນີນການປະເມີນ ຫລັງຈາກນັ້ນສົ່ງໃຫ້ຜູ້ອຳນວຍການ ຊຶ່ງຖືວ່າເປັນຂັ້ນຕອນສຸດທ້າຍ.
- ກະກຽມສັນຍາພະນັກງານ ປະຈຳປີ 2016: ຍັງບໍ່ສາມາດອອກສັນຍາໄດ້ ເນື່ອງຈາກກຳລັງລໍຖ້າການອະນຸມັດຈາກຜູ້ໃຫ້ທຶນກ່ຽວກັບນະໂຍບາຍ.
- ສັງລວມລາຍຊື່ພະນັກງານ ທັງໝົດ ເພື່ອຕິດຕາມການສືບຕໍ່ສັນຍາປະກັນໄພ: ໄດ້ແຈ້ງຫາບໍລິສັດປະກັນໄພ ເພື່ອຕໍ່ສັນຍາປະກັນໄພໃຫ້ພະນັກງານຜູ້ທີ່ໄດ້ສືບຕໍ່ວຽກກັບ ທລຍ.
- ການຄັດເລືອກພະນັກງານຄຸ້ມຄອງລະບົບຖານຂໍ້ມູນວຽກງານປັບປຸງຊີວິດການເປັນຢູ່ ເຊື່ອມສານດ້ານໂພຊະນາການ: ກຳລັງຢູ່ໃນຂັ້ນຕອນສຸດທ້າຍ ຄື: ການເຈລະຈາດ້ານຄ່າຕອບແທນ ແລະ ການເຊັນສັນຍາ.
- ການຄັດເລືອກຫົວໜ້າຮັບຜິດຊອບວຽກປັບປຸງຊີວິດການເປັນຢູ່ເຊື່ອມສານດ້ານໂພຊະນາການ: ໄດ້ເຊັນສັນຍາເຮັດວຽກ ແລະ ເລີ່ມວຽກໃນວັນທີ 01 ກຸມພາ 2016.

- <u>ວຽກງານປັບປຸງຊີວິດການເປັນຢູ່ ແລະ ໂພສະນາການ</u>

ຈຸດປະສົງຂອງກິດຈະກຳແມ່ນເພື່ອສົ່ງເສີມ ຊ່ວຍເຫລືອ ຜູ້ທຸກຍາກໂດຍຈັດຕັ້ງ ກຸ່ມຊ່ວຍເຫລືອຊຶ່ງກັນ ແລະ ກັນ, ຊຶ່ງມີກິດຈະກຳຕ່າງໆເຊັ່ນ: ການທ້ອນເງິນຂອງກຸ່ມ, ການລ້ຽງສັດ, ການປູກຜັກ, ການລ້ຽງປາ, ການຕ່ຳຫູກ ແລະ ກິດຈະກຳອື່ນໆ ທີ່ເປັນການສ້າງລາຍຮັບຕ່າງໆ. ການທ້ອນເງິນໃນເດືອນ ທັນວາ 2015 ໃນ 4 ເມືອງ ຄື ເມືອງຮ້ຽມ, ເມືອງ

ຊ່ອນ (ແຂວງ ຫົວພັນ) ແລະ ເມືອງ ເຊໂປນ ແລະ ເມືອງນອງ (ແຂວງ ສະຫັວນນະເຂດ) ມີ 85 ບ້ານ, 306 ກຸ່ມ,

| ລ/ດ | ຊື່ ເມືອງ | ຈ/ນ ບ້ານ | ຈ/ນ ກຸ່ມ | ຈ/ນ ສະ ມາຊິກ | ຈ/ນ ຜູ້ຍິງ | ຈ/ນ ທຶນທີ່ ທລຍ ທີ່ສະໜັບສະໜູນ | ຈ/ນ ເງິນທີ່ໄດ້ ປ່ອຍກູ້ທັງໝົດ | ຈ/ນ ເງິນທີ່ຍັງບໍ່ ທັນໄດ້ປ່ອຍກູ້ | ຄິດໄລ່ເປັນ % |
|---|---|---|---|---|---|---|---|---|---|
| 1 | ມ. ຣ້ຽມ | 20 | 67 | 978 | 576 | 994,089,000 | 942,662,000 | 51,427,000 | 95% |
| 2 | ມ. ຊ່ອນ | 20 | 68 | 1,018 | 615 | 1,053,520,000 | 1,050,400,000 | 3,120,000 | 99% |
| 3 | ມ. ເຊໂປນ | 30 | 104 | 1,284 | 1,000 | 1,466,304,744 | 1,141,325,000 | 325,019,744 | 78% |
| 4 | ມ. ນອງ | 15 | 67 | 966 | 954 | 1,561,600,000 | 1,524,190,000 | 37,410,000 | 98% |
| ລວມທັງໝົດ: | | 85 | 306 | 4,246 | 3,145 | 5,075,513,744 | 4,658,577,000 | 416,976,744 | 92% |

ສະມາຊິກທັງໝົດມີ 4,246 ຄົນ,ຍິງມີ 3,145 ຄົນ, ເງິນຝາກທັງໝົດໃນເດືອນ ທັນວາ 2015 ມີ: 11,261,000 ກີບ ແລະ ລວມຍົກຍອດມາທັງໝົດມີ: 286,682,000 ກີບ ດັ່ງຕາຕະລາງຂ້າງລຸ່ມນີ້:

**ຕາຕະລາງ 7: ສະຫລຸບການທ້ອນເງິນ**

*<u>ແຫຼ່ງຂໍ້ມູນ:</u> ໜ່ວຍງານປັບປຸງຊີວິການເປັນຢູ່-ໂພສະນາການ, ທລຍ, 22 ທັນວາ 2015*

ສຳລັບວຽກງານດ້ານໂພຊະນາການໃນໄລຍະທີ່ຜ່ານມາໄດ້ມີການຈັດຕັ້ງປະຕິບັດ ແລະ ເຄື່ອນໄຫວເປັນປົກກະຕິຢູ່ແຕ່ລະສະໂມສອນໂພຊະນາການຂອງແຕ່ລະເມືອງໂດຍນຳໃຊ້ງົບປະມານທີ່ຍັງເຫລືອຢູ່ແຕ່ລະສະໂມສອນ ຍອັນວ່າງົບປະມານມີພຽງພໍສຳລັບການເຄື່ອນໄຫວວຽກງານດັ່ງກ່າວໄດ້ຢ່າງສະດວກສະບາຍ. ວຽກທີ່ປະຕິບັດໃນເດືອນນີ້ມີຢູ່ 4 ກິດຈະກຳຫລັກເຊັ່ນ: 1)ການປຸງແຕ່ງອາຫານກາງເວັນ; 2)ໂພຊະນາສຶກສາ; 3)ໂພຊະນາການ ແມ່ ແລະ ເດັກ; 4)ກິດຈະກຳສວນຄົວ. ສ່ວນການໃຫ້ອາຫານເສີມ ແຕ່ລະສະໂມສອນໂພຊະນາການແມ່ນໃຫ້ 3 ເທື່ອ ຕໍ່ 1 ອາທິດ ໃນນັ້ນແມ່ນສະມາຊິກສະໂມສອນໄດ້ປະກອບວັດຖຸດິບເຊັ່ນ: ເຂົ້າສານ, ປະເພດຜັກ, ຫົວມັນ, ໝາກອຶ ແລະ ເຄື່ອງປ່າຂອງດົງປະເພດຕ່າງໆອີກດ້ວຍ. ໃນນັ້ນມີຜູ້ເຂົ້າຮ່ວມໃນການປຸງແຕ່ງອາຫານກາງເວັນລວມທັງໝົດມີ: ແມ່ມານ ມີ 464 ເທື່ອຄົນ. ແມ່ລູກອ່ອນມີ: 436 ເທື່ອຄົນ, ເດັກ 6-24 ເດືອນມີ 935 ເທື່ອຄົນ, ຮ່ວມອາຫານກາງເວັນມີ 2,757 ເທື່ອຄົນ, ຜູ້ທຸກຍາກມີ 111 ເທື່ອຄົນ.

**ຕາຕະລາງ8: ສັງລວມຜູ້ເຂົ້າຮ່ວມບໍລິການຢູ່ສະໂມສອນໂພຊະນາການຂອງເດືອນ ທັນວາ 2015**

| ລ/ດ | ຊື່ ເມືອງ | ແມ່ມານ | ແມ່ລູກອ່ອນ | 0-6 ເດືອນ | 6-24 ເດືອນ | ອາຫານ ກ/ວ | ຜູ້ເຂົ້າຮ່ວມທັງໝົດ |
|---|---|---|---|---|---|---|---|
| 1 | ມ. ຣ້ຽມ | 183 | 188 | 0 | 278 | 47 | 21 |
| 2 | ມ. ຊ່ອນ | 144 | 120 | 120 | 240 | 624 | 0 |
| 3 | ມ. ເຊໂປນ | 120 | 108 | 108 | 348 | 774 | 90 |
| 4 | ມ. ນອງ | 17 | 20 | 20 | 69 | 1,312 | 0 |

| ລວມທັງໝົດ: | 464 | 436 | 248 | 935 | 2,757 | 111 |
|---|---|---|---|---|---|---|

*ແຫຼ່ງຂໍ້ມູນ: ໜ່ວຍງານປັບປຸງຊີວິການເປັນຢູ່-ໂພສະນາການ, ທລຍ, 22 ທັນວາ 2015*

4. ແຜນວຽກສໍາລັບເດືອນ ມັງກອນ 2016

- ວຽກງານພັດທະນາຊຸມຊົນ

- ຕິດຕາມການວາງແຜນພັດທະນາຂັ້ນກຸ່ມບ້ານ ແລະ ຂັ້ນເມືອງ ຂອງ 3 ເມືອງ CDD ໃໝ່ ແລະ ຕິດຕາມການກະກຽມຄວາມພ້ອມຂອງຊຸມຊົນຂອງ 5 ບ້ານທີ່ທົດລອງ CFA ແລະ ການກໍ່ສ້າງໂຄງການຍ່ອຍ ແລະ ຕິດຕາມການຈັດກອງປະຊຸມວາງແຜນພັດທະນາຂັ້ນກຸ່ມບ້ານ ແລະ ຂັ້ນເມືອງຂອງ 3 ເມືອງ CDD ໃໝ່.
- ປະສານງານກັບໜ່ວຍງານວິສະວະກໍາສໍາລັບການກວດຄືນຮູບແບບ O&M ສໍາລັບບ້ານທີ່ໄດ້ຮັບໂຄງການຍ່ອຍ ແລະ ການເກັບກໍາຂໍ້ມູນ 6-12 ເດືອນຂອງໂຄງການຍ່ອຍຫລັງສໍາເລັບການກໍ່ສ້າງໂຄງການ.
- ກະກຽມແຜນຈັດຝຶກອົບຮົມກ່ຽວກັບ ການສົ່ງເສີມສິດສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ ສໍາລັບພະນັກງານພາກສະໜາມຢູ່ 3 ເມືອງເປົ້າໝາຍຂອງ 2 ແຂວງ ທີ່ມີວຽກງານສົ່ງເສີມຊີວິດການເປັນຢູ່ ແລະ ໂພສະນາການ ຊຶ່ງຈະຈັດຂຶ້ນໃນລະຫວ່າງວັນທີ 11-15 ມັງກອນ 2016.
- ຕິດຕາມການຈັດທັດສະນະສຶກສາສໍາລັບຜູ້ປະສານງານກຸ່ມບ້ານຍິງ ຈາກເມືອງຈອມເພັດ ແລະ ເມືອງນໍ້າບາກ ແຂວງ ຫລວງພະບາງ ເພື່ອໄປແລກປ່ຽນບົດຮຽນກ່ຽວກັບ ການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນທີ່ຕິດພັນກັບການສົ່ງເສີມສິດສະເໝີພາບຍິງຊາຍ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ.
- ສືບຕໍ່ປັບປຸງແຜນວຽກບົດບາດຍິງ-ຊາຍ (GESI) ແລະ ປັບລາຍລະອຽດແຜນການນໍາໃຊ້ງົບປະມານການຈັດຕັ້ງປະຕິບັດກິດຈະກໍາຕ່າງໆ ໃນວຽກງານ GESI ປະຈໍາຮອບວຽນ 13.
- ຕິດຕາມລົດລາຍການຜູ້ເຂົ້າຮ່ວມກອງປະຊຸມເພດຍິງ ແລະ ຊົນເຜົ່າໃນຂັ້ນຕອນການວາງແຜນພັດທະນາຮອບວຽນ 13 ແລະ ສືບຕໍ່ປັບປຸງ Script ແລະ TOR ສໍາລັບຈັດຫາຜູ້ຜະລິດ DVD ກ່ຽວກັບ ແມ່ຍິງຕົວແບບ ແລະ ເຂັ້ມແຂງໃນການປະກອບສ່ວນຈັດຕັ້ງປະຕິບັດວຽກງານຊ່ວຍ ທລຍ ຢູ່ຂັ້ນກຸ່ມບ້ານ ແລະ ບ້ານເປົ້າໝາຍຂອງ ທລຍ ໃຫ້ໄດ້ 1 ເລື່ອງ.
- ສືບຕິດຕາມການປັບປຸງຫນ້າທີ່ຮັບຜິດຊອບ (TOR) ເພື່ອຜະລິດ ຜະລິດ DVD ກະຕູນ ກ່ຽວກັບ ຄວາມໂປ່ງໃສຮ່ວມກັບທະນາຄານໂລກ ແລະ ເຜີຍແຜ່ຂໍ້ມູນ ການມີສ່ວນຮ່ວມ ຂອງແມ່ຍິງຕໍ່ກັບການຈັດຕັ້ງປະຕິບັດໂຄງການ ທລຍ ແລະ ຜົນປະໂຫຽດທີ່ແມ່ຍິງຢູ່ໃນບ້ານເປົ້າໝາຍໄດ້ຮັບຈາກການລົງທຶນ ລວມທັງຂໍ້ມູນຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດໂຄງການຂອງ ທລຍ ຜ່ານລາຍການໂທລະພາບ, ໜັງສືພິມ, ວາລະສານ ແລະ ວິທະຍຸສະຫະພັນແມ່ຍິງລາວ.

- ຕິດຕາມຊຸກຍູ້ໃນການຜະລິດເຄື່ອງມືກະຈາຍຂໍ້ມູນ-ຂ່າວສານຂອງ ກິດຈະກຳປັບປຸງຊີວິດການເປັນຢູ່ ເຊື່ອມສານໂພຊະນາການ ເພື່ອຮັບໃຊ້ໃນການຂະຫຍາຍອີກ 80 ບ້ານ (ໃນນັ້ນ ປະກອບມີ CDD tool kids) ແລະ ຕິດຕາມການຈັດຕັ້ງປະຕິບັດໂຄງການຢູ່ແຂວງ ຫລວງນໍ້າທາ ຮ່ວມກັບ SDC ພ້ອມທັງເກັບກຳຂໍ້ມູນ ໂພຊະນາການ ສົ່ງໃຫ້ທະນາຄານໂລກ.

- <u>ວຽກງານວິສະວະກຳ</u>

- ສືບຕໍ່ກະກຽມແຜນລົງກວດກາໂຄງການຍ່ອຍ ພາຍໃຕ້ທຶນສົມທົບລັດຖະບານ ຮ່ວມກັບສະພາແຫ່ງຊາດ, ກະຊວງການເງິນ, ຄພທສ ແລະ ກະຊວງແຜນການ.
- ສືບຕໍ່ລົງຕິດຕາມໂຄງການຍ່ອຍ ຮອບວຽນທີ 11, 12 ແລະ ສືບຕໍ່ເຮັດວຽກຮ່ວມກັບ ອົງການແຮງງານສາກົນ (ILO).
- ສືບຕໍ່ກະກຽມສຳຫລວດໂຄງການຍ່ອຍທີ່ເປັນທຶນສົມທົບຕ່າງປະເທດ (IDA) ຮອບວຽນທີ 13.
- ສືບຕໍ່ຝຶກອົບຮົມຜູ້ອຳນວຍຄວາມສະດວກດ້ານ ວຽກງານ ຊຸມຊົນເປັນເຈົ້າໃນດ້ານສຸຂະອານາໄມ (ຊຈສ) ຢູ່ເມືອງ ນອງ, ແຂວງ ສະຫວັນນະເຂດ; ແຂວງສາລະວັນ, ເຊກອງ ແລະ ແຂວງ ອັດຕະປື.
- ສືບຕໍ່ກະກຽມຝຶກອົບຮົມພື້ນຖານການນຳໃຊ້ໂປຣແກຣມແຜນທີ່ ແລະ ສືບຕໍ່ກະກຽມສ້າງຫລັກສູດການນຳໃຊ້ 3D.
- ສືບຕໍ່ກະກຽມແຜນລົງຕິດຕາມຄຸນນະພາບໂຄງການຮອບວຽນ 11 ຮ່ວມກັບຊ່ຽວຊານທະນາຄານໂລກ ທ່ານ ກາວັນ (Garvan).
- ຂຶ້ນແຜນຮ່ວມມືກັບສະພາແຫ່ງຊາດ ເພື່ອເອົານັກສຶກສາປີສຸດທ້າຍລົງກວດກາຄຸນນະພາບຂອງໂຄງການຍ່ອຍຢູ່ ແຂວງ ສາລະວັນ ແລະ ແຂວງ ສະຫວັນນະເຂດ.
- ສັງລວມຂໍ້ມູນໂຄງການຍ່ອຍຮອບວຽນ 13 ແລະ ລົງກວດກາໂຄງການຍ່ອຍຮ່ວມກັບທະນາຄານໂລກທີ່ແຂວງ ສະຫວັນນະເຂດ.
- ຕິດຕາມໂຄງການລົງປະເມີນຜົນຂອງບໍລິສັດທີ່ປຶກສາກ່ຽວກັບປະສິດທິພາບຂອງການລົງທຶນ ແລະ ການບຳລຸງຮັກສາໂຄງການຍ່ອຍ (Cost Effective and O&M).

- <u>ວຽກງານຕິດຕາມ-ປະເມີນຜົນ</u>

- ຕິດຕາມຄືນຂໍ້ຄົງຄ້າງຂອງການຈັດຕັ້ງປະຕິບັດຮອບວຽນທີ່ຜ່ານມາເຊັ່ນໂຄງການລ້າຊ້າໃນຮອບວຽນທີ່ຜ່ານມາ ເພື່ອຫາວິທີແກ້ໄຂ ໃຫ້ສຳເລັດ ແລະ ສາມາດອຳນວຍຄວາມສະດວກຕໍ່ຊີວິດການເປັນຢູ່ຂອງຊຸມຊົນ.
- ຕິດຕາມການນຳໃຊ້ລະບົບຖານຂໍ້ມູນໃໝ່ຂອງ ທລຍ ໄລຍະທີ 2 ທີ່ໄດ້ຝຶກອົບຮົມໄປທັງຂັ້ນສູນກາງ, ແຂວງ ແລະ ເມືອງ ເພື່ອຮັບປະກັນການນຳໃຊ້ລະບົບຖານຂໍ້ມູນໃຫ້ມີປະສິດທິພາບ ແລະ ໄດ້ຮັບຜົນດີ.
- ປະສານກັບທີ່ປຶກສາອາວຸໂສເພື່ອຂໍຄຳເຫັນໃຫ້ແກ່ບົດປະເມີນການນຳໃຊ້ໂຄງການທີ່ຖືກນຳໃຊ້ ແລະ ບໍ່ຖືກນຳໃຊ້ ເພື່ອກວດແກ້ ແລະ ຈັດພິມ ແຈກຢາຍໃຫ້ແຕ່ລະພາກສ່ວນທີ່ກ່ຽວຂ້ອງຂັ້ນສູນກາງ, ແຂວງ, ເມືອງ ແລະ ຂັ້ນບ້ານ.

- ວາງແຜນລົງຊີ້ນຳຂັ້ນທ້ອງຖິ່ນກ່ຽວກັບການນຳໃຊ້ເຄື່ອງມື ກົນໄກສະແດງຄຳຄິດເຫັນ ແລະ ແກ້ໄຂບັນຫາ (ກສກ) ອີງຕາມຜົນໄດ້ຮັບຈາກການປະເມີນຄັ້ງຜ່ານມາ ເພື່ອຍົກສູງຄຸນນະພາບ ແລະ ອັດຕາການນຳໃຊ້ເຄື່ອງມື ກສກ ເປັນຕົ້ນການນຳໃຊ້ສາຍດ່ວນ 161 ເພື່ອໃຫ້ໄດ້ຕາມຈຸດປະສົງ ແລະ ຄາດໝາຍຂອງເຄື່ອງມືດັ່ງກ່າວ.
- ວາງແຜນ ແລະ ກະກຽມການຝຶກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານຕິດຕາມ-ປະເມີນຜົນ ຂັ້ນສູນກາງ ຈາກຊ່ຽວຊານພາຍນອກ.

- <u>ວຽກງານບໍລິຫານ-ການເງິນ</u>

- ກະກຽມເບີກຖອນເງິນໂຄງການຍ່ອຍບ້ວງທຶນສົມທົບລັດຖະບານຮອບວຽນ 12, ຈຳນວນ 7 ໂຄງການ, ປະມານ 1 ຕື້ກີບ.
- ປິດສະຫລຸບບັນຊີປະຈຳເດືອນ ທັນວາ 2015, ສຳລັບສົກປີ 2015-2016.
- ກະກຽມເອກະສານຄ່ຽນເງິນໂຄງການຍ່ອຍບ້ວງຜູ້ໃຫ້ທຶນສຳລັບຮອບວຽນ 12 ຂອງແຂວງ ຫລວງນ້ຳທາ ປະມານ 220,000 ໂດລາສະຫະລັດ ນຳຄັງເງິນແຫ່ງຊາດ.
- ສົ່ງເອກະສານຄ່ຽນເງິນບ້ວງບໍລິຫານປະຈຳເດືອນ ພະຈິກ 2015 ປະມານ 315,000 ໂດລາ, ນຳຄັງເງິນແຫ່ງຊາດ
- ກະກຽມຂໍ້ມູນສຳລັບການເຮັດບົດລາຍງານປະຈຳໄຕມາດ 01, ສຳລັບສົກປີ 2015-2016 ໃຫ້ຜູ້ໃຫ້ທຶນ.

- <u>ວຽກງານຈັດຕັ້ງ</u>

- ປະສານງານກັບຫົວໜ້າພະແນກ ແລະ ໜ່ວຍງານ ເພື່ອທົບທວນພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງບາງຕຳແໜ່ງທີ່ມີຄວາມຈຳເປັນ.
- ສືບຕໍ່ສັງລວມຄຳເຫັນ ແລະ ການພິຈາລະນາສຸດທ້າຍ ກ່ຽວກັບການຕໍ່ສັນຍາຂອງພະນັກງານແຕ່ລະຄົນ ແລະ ກະກຽມສັນຍາພະນັກງານ ປະຈຳປີ 2016.
- ປະສານງານກ່ຽວກັບການຈັດກອງປະຊຸມປຶກສາຫາລື ເພື່ອຄົ້ນຄວ້າເອກະສານຄຸ້ມຄອງບໍລິຫານບຸກຄະລາກອນ.
- ກະກຽມເອກະສານ ເພື່ອໃຫ້ໜ່ວຍງານກວດສອບພາຍໃນກວດກາວຽກງານຈັດຕັ້ງ.
- ກະກຽມການນຳສະເໜີວຽກງານນະໂຍບາຍ ແລະ ຈັດຕັ້ງຂອງ ທລຍ ໃຫ້ແກ່ພະນັກງານປັບປຸງຊີວິດການເປັນຢູ່ ເຊື່ອມສານໂພຊະນາການ ໃນຊຸດຝຶກອົບຮົມຄັ້ງວັນທີ 18-22 ມັງກອນ 2016 ທີ່ ສູນກາງ ແລະ ກະກຽມການປະເມີນ ແລະ ຄັດເລືອກພະນັກງານຂັບລົດ ຂັ້ນສູນກາງ.

- <u>ດ້ານປັບປຸງຊີວິດການເປັນຢູ່ ແລະ ດ້ານໂພຊະນາການ</u>

- ຕິດຕາມກວດກາການທ້ອນເງິນ, ການເກັບກູ້, ການປ່ອຍເງິນກູ້ໃຫ້ສະມາຊິກກຸ່ມ ກຊກ ແລະ ຕິດຕາມກິດຈະກຳປັບປຸງຊີວິດການເປັນຢູ່ ແລະ ກິດຈະກຳທີ່ສ້າງລາຍຮັບປະເພດຕ່າງໆ.
- ກະກຽມເອກະສານຕ່າງໆ ດ້ານຂໍ້ແນະນຳໃນການສ້າງຕັ້ງກຸ່ມ ກຊກ ໃຫ້ແກ່ເມືອງໃໝ່ ພ້ອມທັງດ້ານວິຊາການຕ່າງໆ.

- ສືບຕໍ່ປຸງແຕ່ງອາຫານກາງເວັນໃນ 15 ສະໂມສອນໂພຊະນາການ ພ້ອມທັງໃຫ້ຄວາມຮູ້ດ້ານສຸຂະສຶກສາ ແລະ ໂພຊະນາສຶກສາ
- ສືບຕໍ່ປະເມີນດ້ານແມ່ ແລະ ເດັກ ໂດຍສະເພາະດ້ານການຂາດສານອາຫານຂອງເດັກ ແລະ ຊຸກຍູ້ສິ່ງເສີມດ້ານການເຮັດສວນຄົວ ຂອງສະມາຊິກ ສະໂມສອນໂພຊະນາການ.

| ຜູ້ອຳນວຍການບໍລິຫານ ທລຍ | ຫົວໜ້າພະແນກ ຕິດຕາມປະເມີນຜົນ | ສັງລວມ ແລະ ລາຍງານ |
|---|---|---|
| ດ.ພ.ທ.ສ ຜູ້ອຳນວຍການ ບໍລິຫານ | | |
| ບຸນຂວາງ ສຸວັນນະພັນ | ທັດທະຈັນ ພົມພັນທະວົງ | ມະນີວັນ ອິນທະປັນຍາ |
| Bounkhouang SOUVANNAPHANH | | |